# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 13 ສິງຫາ 2006 - (08-13-2006)

## ຕັ້ງໝັ້ນຄົງຢູ່ໂດຍແນໃສ່ສວັນເປັນສູນກາງ

**ຂໍ້ພຣະຄັມພີໃນບົດຮຽນ:** ( ໂຄໂລຊາຍ 2:20ກ; 3:1-10, 12-14,17 )

**ພຣະຄັມພີແຫ່ງຄວາມຈິງ:** ການເອົາໃຈໃສ່ຊັບສົມບັດທີ່ຢູ່ເບື້ອງເທິງ ຈະຊ່ອຍໃຫ້ບັນດາຜູ້ທີ່ເຊື່ອດຳເນີນຊີວິດໃນພຣະເຈົ້າຢູ່ໃນໂລກນີ້ ແລະຈູງໃຈຄົນທັງຫລາຍໃຫ້ມາເຖິງພຣະຄຣິດ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍໃຫ້ຜູ້ທີ່ມີຄວາມເຊື່ອທີ່ໃຫຍ່ແລ້ວຄືໃນຖານະທີ່ເປັນຕົວແທນໃນການທຳງານຂອງພຣະເຈົ້າຄືການປ່ຽນແປງຮີດຄອງປະເພນີຂອງພວກເຂົາໂດຍ:

* ໃຫ້ເຂົ້າໃຈຄວາມໝາຍຂອງການຕັ້ງໝັ້ນຄົງຢູ່ໂດຍແນໃສ່ສວັນ ເປັນສູນກາງ, ແລະ
* ເພື່ອຈະໄດ້ຈະເຣີນເຕີບໃຫຍ່ຂຶ້ນໃນທາງທີ່ຈະປົດອອກສິ່ງຂອງແບບເກົ່າ ແລະສວມໃສ່ສິ່ງຂອງໃໝ່ໆ.

### ສຶກສາພຣະຄັມພີ

**ເຮັດແນວໃດຈຶ່ງຈະຕັ້ງໝັ້ນຄົງຢູ່ໂດຍແນໃສ່ສວັນເປັນສູນກາງ ຄືຈະໃຫ້ເພີ້ມຂຶ້ນເພື່ອໃຫ້ເກີດຜົນໃຫ້ມີປະສິດຕິພາບໃຫ້ສົມກັບທີ່ໄດ້ເປັນຕົວແທນພຣະຄຣິດຕໍ່ໂລກນີ້?**

ມີສິ່ງສຳຄັນສິ່ງນຶ່ງທີ່ຈະເຮັດໃຫ້ທ່ານໄດ້ຮັບຄວາມສຳເຣັດໃນການທ່ອງທ່ຽວກໍຄືຈະຕ້ອງຕັ້ງໝັ້ນຄົງຢູ່ໂດຍແນໃສ່ທີ່ຈຸດປາຍທາງສຸດທ້າຍຂອງທ່ານ. ມີຫລາຍຄັ້ງທີ່ການຕັດສິນໃຈເລືອກໃນລະຍະທາງແຫ່ງການດຳລົງຊີວິດຂອງພວກເຮົາແມ່ນມີຜົນສະທ້ອນໂດຍກົງຄືຈຸດມຸ້ງໝາຍທີ່ຍິ່ງໃຫຍ່ນີ້. ໃນທິດທາງດຽວກັນ, ພວກເຮົາຜູ້ຊອກຫາຫົນທາງທີ່ຈະຕິດຕາມພຣະເຢຊູຄຣິດຈະຕ້ອງຈື່ໄວ້ສເມີວ່າພວກເຮົາແມ່ນໝາກຜົນທີ່ມາຈາກສວັນ. ຈົ່ງແນຈຸດສູນກາງໃສ່ຜົນລາງວັນຄືຄວາມຊົມຊື່ນຍິນດີທີ່ລໍຄອຍພວກເຮົາຢູ່ທີ່ນັ້ນມັນຈະຊ່ວຍໃຫ້ພວກເຮົາມີຄວາມສລາດຂຶ້ນໃນການທີ່ຈະເລືອກທີ່ຈະເອົາມາໃຊ້ໃນຊີວິດປະຈຳວັນ. ທ່ານສາມາດທີ່ຈະເຮັດໃຫ້ສຸຂພາບຢູ່ດີໃຫ້ສົມດູນກັບຈິດໃຈທີ່ຢູ່ອີກກ້ານຶ່ງຄືຟ້າສວັນແລະເຮັດໃຫ້ມີຫຸ້ນສ່ວນທີ່ເປັນໄປໄດ້ໂດຍຜ່ານອອກມາໃນຊີວິດປະຈຳວັນເພື່ອໃຫ້ໂອກາດແກ່ອີກເບື້ອງນຶ່ງໄດ້ບໍ່? ແມ່ນຫຍັງຄືສິ່ງທີ່ຈະເຮັດໃຫ້ເຫັນຄວາມສເມີພາບນີ້ ?

### 1. ແນໃສ່ທີ່ເບື້ອງເທິງເປັນສູນກາງ: ( ໂກໂລຊາຍ 2: 20ກ; 3:1-4 )

ອັຄສາວົກໂປໂລໄດ້ເຄີຍຖືກຈອງຈຳ ( 4:10 ) ໃນເວລາທີ່ເພິ່ນໄດ້ຂຽນຈົດໝາຍສະບັບນີ້ໄປເຖິງຄຣິສຕຽນທີ່ຢູ່ເມືອງໂກໂລຊາຍ, ເປັນເມືອງນຶ່ງທີ່ຕັ້ງຢູ່ໃນເຂດເອເຊັຍນ້ອຍ. ເຖິງແມ່ນວ່າເພິ່ນບໍ່ເຄີຍໄດ້ໄປເຂດນີ້ມາກ່ອນ, ໂປໂລໄດ້ເລີ້ມຕົ້ນດ້ວຍການເວົ້າເຖິງເຣື່ອງຂອງໂບດນີ້ໂດຍເພື່ອນທີ່ໃກ້ຊິດທັມມະດາຄົນນຶ່ງຄື ເອປາຟາ ( 1:7-8 ). ເຫດຜົນທີ່ໂປໂລຂຽນຈົດໝາຍມາຄັ້ງນີ້ກໍຄື ເຮັດແນວໃດຈຶ່ງຈະເອົາຊະນະຕໍ່ການສອນຜິດຄືບິດເບືອນຄວາມຈິງເຣື່ອງພຣະຄຣິດ. ໂປໂລໄດ້ຂຽນດັ່ງນີ້, " **ເຮົາກ່າວຢ່າງນີ້ກໍເພື່ອບໍ່ໃຫ້ຜູ້ໃດຊັກຊວນເຈົ້າທັງຫລາຍດ້ວຍຄຳລໍ້ລວງໜ້າຟັງ" 2:4 ໂປໂລໄດ້ບອກລາຍລະອຽດ ແລະເຕືອນໃຫ້ລະວັງຈະຕົກເປັນເຫຍື່ອຂອງສະຕິປັນຍາຝ່າຍໂລກແລະຄຳລໍ້ລວງທີ່ໄຮ້ສາຣະຕາມຕຳນານຂອງມະນຸດຄືຕາມອຳນາດສິ່ງສັກສິດແຫ່ງສາກົນຈັກກະວານແລະບໍ່ໃຊ່ຕາມອົງພຣະຄຣິດ. ຂໍ້ 8, ຄຳຕອບທີ່ຖືກຕ້ອງທີ່ສຸດກໍຄືພຣະຄຣິດ, " ເພາະວ່າໃນພຣະອົງນັ້ນພວກເຈົ້າກໍມີຊີວິດຄົບບໍຣິບູນ." ຂໍ້ 9.**

ໃນຈຸດສຳຄັນທີ່ຄວນຈະສົນໃຈກໍຄືໂປໂລໄດ້ເຕືອນຜູ້ທີ່ເຊື່ອທັງຫລາຍທີ່ໄດ້**ຕາຍກັບພຣະຄຣິດແລ້ວ**. ເມື່ອພຣະເຢຊູຊົງສິ້ນພຣະຊົນຢູ່ເທິງໄມ້ກາງແຂນນັ້ນ, ພຣະອົງໄດ້ຊົງຕາຍເພື່ອແລະໄດ້ໃຊ້ຄ່າຄວາມຜິດບາບທີ່ພວກເຮົາໄດ້ຕິດ

ໄວ້ໃຫ້ແລ້ວ. ໃນເວລາທີ່ພວກເຮົາເຊື່ອໃນເລື່ອງຂ່າວປະເສີດອີກທັງໄດ້ຮັບຊີວິດອັນຕລອດໄປເປັນນິດເປັນຂອງປະທານ, ພວກເຮົາກໍໄດ້ຕາຍໃນຄວາມຜິດບາບຂອງພວກເຮົາແລ້ວແລະມັນກໍບໍ່ມີສິດທວງຖາມສິ່ງໃດໆ ອີກຕໍ່ໄປ. ຜູ້ທີ່ເຊື່ອແລ້ວກໍແມ່ນໄດ້ຖືກປົດປ່ອຍໃຫ້ເປັນອິສລະ ແລະບໍ່ໄດ້ເປັນຂ້ອຍຂ້າຂອງຄວາມຜິດບາບ-ແລະມີສິດເສລີພາບໃນຊີວິດໃຫມ່ທີ່ພວກເຮົາໄດ້ມາກໍເພາະການຊຶ່ງເປັນອັນນຶ່ງອັນດຽວຂອງພຣະຄຣິດ.

ໃນປໂຍກທີ່ວ່າ **ໃຕ້ອຳນາດບັນຍັດຫລັກທັມຂອງມະນຸດ** ຕໍ່ໄປເຖິງການສອນຜິດແລະອາດຈະເປັນໄປໄດ້ຄື " ຫລັກທັມປອມແລະສອນຜິດ " ( ຂໍ້ 18, 23 ), **ເພື່ອຈະບໍ່ໄດ້ເອົາຄຳສອນມະນຸດຄື " ຢ່າຈັບ, ຢ່າຊີມ, ຢ່າແຕະຕ້ອງ "** ( **ຂໍ້ 21** ). **ຈົ່ງສັງເກດຄຳສັ່ງສອນທີ່ກົງກັນຂ້າມພວກນີ້ໃຫ້ດີ.** ຄຣິສຕຽນຄວນຫລີກເວັ້ນການກະທຳໃນສິ່ງທີ່ພຣະເຈົ້າຊົງມີຄຳສັ່ງໄວ້, ແຕ່ໃຫ້ສຸມຈິດໃຈໃສ່ໃນສິ່ງທີ່ຈະສະແດງໃຫ້ປາກົດອອກມາໃນຊີວິດປະຈຳວັນຂອງຄຣິສຕຽນໃນທາງບວກຢູ່ສເມີ.

**ເມື່ອທ່ານໄດ້ຖືກໃຫ້ເປັນຄືນມາດ້ວຍກັນກັບພຣະເມສີອາແລ້ວ, ຈົ່ງສແວງຫາສິ່ງຊຶ່ງຢູ່ເບື້ອງເທິງ.** ບັນດາຜູ້ທີ່ເຊື່ອໄດ້ກາຍເປັນອັນນຶ່ງອັນດຽວກັບພຣະຄຣິດແລ້ວຄືໃນການສິ້ນພຣະຊົນ, ການຖືກຝັງໄວ້ແລະການຟື້ນຄືນພຣະຊົນ. ພຣະຜູ້ເປັນເຈົ້າຜູ້ຊົງໄດ້ປະທັບຢູ່ກ້ຳຂວາຂອງພຣະເຈົ້າຄືເປັນຜູ້ແທນພວກເຂົາຢູ່ເທິງສວັນແລ້ວ. ພຣະເຢຊູກໍເປັນເຫມືອນມະຫາປະໂຣຫິດຜູ້ສູງສຸດຂອງຄົນຄຣິສຕຽນ.

ສິ່ງເຫລົ່ານີ້ມີຜົນສະທ້ອນຕໍ່ພວກເຮົາແນວໃດ? ໃນປໂຍກນີ້ **ຈົ່ງສແວງຫາສິ່ງຊຶ່ງຢູ່ເບື້ອງເທິງແລະຈົ່ງເອົາໃຈໃສ່ສິ່ງທີ່ຢູ່ເບື້ອງເທິງ,** ໂປໂລໄດ້ຊ່ວຍໃຫ້ພວກເຮົາໄດ້ໃຊ້ການດຳຣົງຊີວິດປະຈຳວັນໃຫ້ຖືກຕ້ອງໃນປັດຈຸບັນ. **ພວກເຮົາສົມຄວນຈະເຕືອນຕົວເອງຢູ່ສເມີວ່າເຮົາເປັນປະຊາຊົນຂອງ-ໂລກແລະຂອງສວັນ. ແລະຈຸດມຸ້ງຫມາຍທີ່ສຸດກໍຄືເຣື່ອງຂອງສວັນແລະຈົ່ງຈື່ໄວ້ສເມີວ່ານັ້ນແມ່ນຊີວິດທີ່ແທ້ຈິງຂອງເຮົາກໍຄືຊີວິດອັນຕລອດໄປເປັນນິດ, ຊີວິດຂອງພວກເຮົາກໍຢູ່ໃນພຣະຄຣິດ-ແລະຖືກເຊື່ອງໄວ້ດ້ວຍພຣະເມສີອາຊຶ່ງສະຖິດຢູ່ໃນພຣະເຈົ້າ.**

ການຝຶກແອບການນະມັສການໃນແຕ່ລະວັນແມ່ນມີສ່ວນຊ່ວຍໃຫ້ພວກເຮົາສຸມຈິດໃຈໃສ່ພຣະຜູ້ເປັນເຈົ້າ. **ຈົ່ງໃຊ້ເວລາແຕ່ເຊົ້າຂອງແຕ່ລະມື້ອ່ານພຣະຄຳຂອງພຣະອົງ, ຈົ່ງຍົກຍໍຖວາຍຈິດໃຈໂດຍຜ່ານການຮ້ອງເພງແລະການອະທິຖານ, ແລະຕັ້ງສັດຈະໄວ້ວ່າຈະໃຫ້ພຣະອົງໄດ້ປົກຄອງຊີວິດຂອງທ່ານທຸກເວລາໃນຊ່ວງວັນນຶ່ງໆ. ບໍ່ມີວິນຍານອື່ນໃດທີ່ຈະສາມາຝຶກແອບຕິສອນແລະຈ່າຍຄ່າຈ້າງທີ່ແພງທີ່ສຸດນີ້ໄດ້.**

ພວກເຮົາຍັງຈະຕ້ອງມີຊີວິດທີ່ມີຄວາມລະມັດລະວັງແລະຕຽມພ້ອມສເມີແມ້ວ່າວັນເວລາທີ່ຫນ້າງຶດງໍ້ອັສຈັນກຳລັງມາຈະເຖິງແລ້ວ-ຄືການສະເດັດກັບຄືນມາຄັ້ງທີ 2, ເມື່ອພຣະເມສີອາຊົງປາກົດ. ກໍຈະເປັນເວລາທີ່ມີຄວາມຊົມຊື່ນຍິນດີທີ່ສຸດ, ຜູ້ບໍຣິສຸດ(ຜູ້ທີ່ເຊື່ອທັງຫລາຍ ) ບໍ່ວ່າຈະອາຍຸເທົ່າໃດທັງຫມົດກໍຈະປາກົດພ້ອມກັນກັບພຣະອົງໃນສະງ່າຣາສີເຫມືອນກັນ. ໂດຍຮູ້ເຖິງຄວາມຈິງແລະຜົນສະທ້ອນໃນທຸກສິ່ງໃນປັດຈຸບັນແລະອະນາຄົດເຊັ່ນດຽວກັນ. ພວກເຮົາມອງເບິ່ງໂລກແລະຕີລາຄາດ້ວຍເຫດທີ່ໄດ້ເກີດຂຶ້ນ. ທັງການຕີລາຄາແລະການສະແດງອອກໃນຊີວິດປະຈຳວັນກໍເປັນພື້ນຖານຈະມີຜົນໃຫ້ໃນການແຜ່ຂຍາຍ ໂດຍການສຸມຈິດໃຈໃສ່ຄືຊີວິດການດຳຣົງຊີວິດໃນພຣະຄຣິດແລະສິ່ງທີ່ພຣະອົງຊົງເຮັດ.

**2. <u>ຈົ່ງປະລະຖິ້ມທາງເກົ່າ:</u>** ( ໂຄໂລຊາຍ 3:5-10 )

ໂປໂລຍັງຄົງສເນີໃຫ້ປະຊາຊົນທີ່ເມືອງໂກໂລຊາຍໂ ດຍການຫນູນໃຈໃຫ້ມີວິທີທີ່ຈະຕໍ່ສູ້ກັບຄວາມຊົ່ວຮ້າຍທີ່ເກີດຂຶ້ນໃນຊີວິດຂອງພວກເຂົາກ່ອນທີ່ຈະເວົ້າສິ່ງໃດອອກມາ. <u>ທີນຶ່ງ,</u> ໂປໂລໄດ້ບອກເຂົາ **ຈົ່ງປະຫານນິສັຍທີ່ອຽງໄປຝ່າຍໂລກທັງຫລາຍເສັຽ.** ພວກເຮົາຈະຕ້ອງເອົາຊະນະຕໍ່ຄວາມຊົ່ວຮ້າຍໃຫ້ໄດ້. ຄືການຫລິ້ນຊູ້, ການຊົ່ວຮ້າຍ, ຣາຄະຕັນຫາ, ຄວາມປາຖນາຊົ່ວ, ແລະຄວາມໂລບຊຶ່ງຖືເປັນການໄຫວ້ພຣະທຽມ. ຊຶ່ງອັຄສາວົກໂປໂລໄດ້ເອີ້ນສິ່ງທັງຫມົດນີ້ວ່າເປັນຄວາມບາບທັງຫລາຍ. **ການຫລິ້ນຊູ້** ມາຈາກຮາກເຫງົ້າດຽວກັນກັບການມົ່ວສຸມຂອງຈຳນວນຫລວງຫລາຍຂອງປະຊາຊົນ, ແລະກໍກາຍມາກິຈວັດຂອງສົມສູ່ກັນ, **ການຊົ່ວຮ້າຍ** ມີຄວາມຫມາຍໄປເຖິງຄວາມຄິດຊົ່ວທີ່ເປື້ອນເປີ, ຄຳເວົ້າ, ການກະທຳທຸກຢ່າງ. ຄຳວ່າ **ຫລົງ**ແມ່ນມີຄວາມຫມາຍກວມລວມຄືການຄວບຄຸມຕົວເອງບໍ່ໄດ້ໃນ**ຣາຄະຕັນ**

**ຫາຄວາມຢາກຂອງຕົນເອງ.** ໃນຂໍ້ຄວາມນີ້ແມ່ນການເຕືອນແລະໃຫ້ຄຳແນະນຳຂອງໂປໂລໂດຍເວົ້າເຖິງຄວາມບາບໃນການຜິດທາງເພດ.

ມີຄຳນຶ່ງທີ່ປາກົດເປັນຄວາມບາບທີ່ຊຸກເຊື່ອງໄວ້ ແລະຜ່ານເຂົ້າມາຕາມທັມມະຊາດແລະເປັນບໍ່ເກີດຂອງຄວາມບາບອີກຢ່າງນຶ່ງຄື **ຄວາມໂລບ.** ຄຳນີ້ມີຄວາມໝາຍກວ້າງຫລາຍຮວມທັງເຫັນແກ່ຕົວເອງເພື່ອໃຫ້ໄດ້ລື່ນຜູ້ອື່ນ, ໃນທາງເພດກໍມີຮວມຢູ່ໃນນີ້ດ້ວຍ. ຄວາມໂລບຄື **ການໄຫວ້ພຣະທຽມ** ເພາະຈະເອົາເພື່ອຕົວເອງກ່ອນແທນພຣະເຈົ້າ. ເຖິງຢ່າງໃດກໍຄືງບໍ່ເໝືອນກັນກັບຄວາມຕ້ອງການຝ່າຍພຣະເຈົ້າແນ່ນອນ, ໂລບມາກແມ່ນບໍ່ມີພໍຈັກເທື່ອ. **ຄົນໂລບມາກກໍຈະມີຄວາມຢາກໄດ້ຫລາຍຂື້ນໄປເລື້ອຍໆ ແລະຈະມີປະສົບການກັບການສົມສູ່ກັນ, ດ້ານວັດຖຸສິ່ງຂອງກໍຈະກາຍເປັນຜູ້ທີ່ມີຄວາມຊຸ່ຽວຊານຂື້ນ, ຖືກຍ້ອງຍໍຕື່ມ, ແລະຝ່າຍໂລກກໍຈະສເນີໃນທຸກສິ່ງທີ່ທ່ານປາຖນາໃຫ້.**

ໂປໂລໄດ້ເຕືອນຜູ້ອ່ານ**ທີ່ຄັ້ງນຶ່ງເຄີຍໄດ້ກະທຳສິ່ງເຫລົ່ານີ້.** ແລະມັນເກີດເປັນຕົ້ນຕໍຂອງການດຳລົງຊີວິດຂອງເຂົາ. ເພິ່ນໄດ້ເຕືອນພວກເຂົາ ເພາະສິ່ງທີ່ບໍ່ຖືກກັບນ້ຳພຣະທັຍພຣະເຈົ້ານີ້ກໍເປັນເຫດໃຫ້ **ພຣະພິໂຣດຂອງພຣະເຈົ້າກໍຈະມາເຖິງຜູ້ທີ່ບໍ່ເຊື່ອຟັງ.** <u>ທີສອງ,</u> ທີ່ໂປໂລໄດ້ບອກໃຫ້ລາຍລະອຽດໃນການສະແດງອອກຂອງຄວາມບາບອີກຢ່າງ ນຶ່ງກໍຄືຄຳເວົ້າ; **ເພິ່ນໄດ້ມີຄຳສັ່ງໃຫ້ຄຣິສຕຽນທີ່ຢູ່ໃນເມືອງໂກໂລຊາຍໃຫ້ປະຖິ້ມເສັຍຄືຄວາມໂກດ, ຄວາມຄຽດຮ້າຍ, ການຄິດປອງຮ້າຍ, ການຫາເລື່ອງ, ເວົ້າຄວາມຫຍາບຄາຍ.** ອີກເທື່ອ, ນີ້ກໍຄື**ການປະພຶດຕົວຕາມແບບຢ່າງຊາວໂລກ.** ມີສາມຫົວຂໍ້ໃຫຍ່ທີ່ເປັນການອະທິບາຍເຖິງການສະແດງອອກຂອງການວາງຕົວທີ່ບໍ່ຖືກຕ້ອງ. ເທວະດາທີ່ວາງຕົວບໍ່ສຸພາບເໝາະສົມຕໍ່ກັນແລະກັນ, ໃນຂນະທີ່ຄວາມຂົມຂື່ນເຖິງຂັ້ນລະເບີດອອກມາດ້ວຍຄວາມຮ້າຍ. **ການຄິດປອງຮ້າຍ** ແມ່ນຄວາມຮູ້ສຶກທີ່ກຽດຊັງຕໍ່ກັນແລະກັນ-ເຮັດໃຫ້ຕົນເອງພໍໃຈໃນທາງທີ່ຜິດ, ບາງທີກໍສ້າງບັນຫາໃຫ້ກັບຕົວເອງດ້ວຍ.

ຕໍ່ໄປ, ໂປໂລໄດ້ກ່າວເຖິງຄວາມບາບສອງຢ່າງ. ຄວາມເປັນຄົນເຈົ້າອາຣົມ ແມ່ນໄດ້ສະແດງອອກມາຄືໂນໂຫວ່າຍ, ອາດໝາຍເຖິງການເວົ້າສິ່ງທີ່ບໍ່ເປັນຄວາມຈິງໃສ່ຜູ້ໃດຜູ້ນຶ່ງ, ເວົ້າຂວັນກັນ. ກ່າວຄຳຫຍາບຄາຍແລະການເວົ້າຕັດບົດໃນກຸ່ມສົນທະນາເຊັ່ນ, ຈົ່ມ, ປ້ອຍ, ດ່າ, ແລະຄຳເວົ້າທີ່ບໍ່ສຸພາບອື່ນໆ ອີກ.

ສຸດທ້າຍ, ໂປໂລໄດ້ມີຄຳສັ່ງ **ຢ່າກ່າວຄຳຕົວະຕໍ່ກັນ.** ຄວາມໝາຍຈາກຄຳກິຣິຍານີ້ອາດຈະເວົ້າວ່າ " **ຈົ່ງຢຸດໃນການຕົວະຕໍ່ກັນແລະກັນ!**"

ທັງໝົດຂອງການສະແດງອອກມາ, ອີກທັງຄຳເວົ້າອັນທີ່ເຄີຍເວົ້າ**ໃນຊີວິດເກົ່າ**-ຄວາມຊົ່ວຮ້າຍທີ່ມີຕາມທັມມະຊາດຂອງມະນຸດທີ່ມີຕິດມາແຕ່ກຳເນີດ. **ພວກເຮົາຕ້ອງຫັນໜີເສັຍຈາກສະພາບຊີວິກເກົ່ານັ້ນ ແລະມາສວມສະພາບມະນຸດທີ່ກຳລັງຊົງສ້າງຂື້ນໃໝ່**ຢູ່ສເມີໃຫ້ເຖິງຄວາມຮູ້ຈັກທັມມະຊາດໃໝ່ຂອງພຣະຄຣິດເອງ. ນີ້ເປັນສິ່ງທີ່ບໍຣິສຸດ, ໃຫ້ເຖິງຄວາມຮູ້ຈັກພຣະເຈົ້າຢ່າງຄົບຖ້ວນ ແລະໄດ້ຊົງ**ຖືກສ້າງຂື້ນໃໝ່**ແລ້ວທີ່ດີຄົບບໍຣິບູນດ້ວຍ**ພຣະປັນຍາອັນລ້ຳເລີດ**ຂອງພຣະຄຣິດແລະການຊົງປະທານໃຫ້ແກ່ພວກເຮົາ. ໂດຍຜ່ານການເກີດໃໝ່, ພວກເຮົາຈະ**ມີຮູບຮ່າງລັກສະນະເໝືອນກັນ ( ທີ່ຄ້າຍຄື) ພຣະຜູ້ຊົງສ້າງຂອງພວກເຮົາ.** ຜູ້ທີ່ເຊື່ອຄວນຈະມີການຝຶກແອບຢ່າງເຄັ່ງຄັດຄືການທີ່ຈະຖອດຖິ້ມຄວາມບາບອັນເກົ່າທີ່ເຮົາເຄີຍຕິດນິດສັຍ, ການກະທຳ, ຄວາມລົ້ງເຄີຍທີ່ມີອອກໄປ.

## 3. <u>ມາສວມໃສ່ທິດທາງໃໝ່ ໆ</u> : ( ໂກໂລຊາຍ: 3:12-14,17 )

ໃນສມັຍກ່ອນນັ້ນທ່ານຈະຖືກເອີ້ນມາຮັບໃຊ້ອີກກໍຕໍ່ເມື່ອທ່ານໄດ້ຕັດສິນໃຈແລ້ວທີ່ຈະປ່ຽນເຄື່ອງນຸ່ງເກົ່າອອກເພາະມັນເປື້ອນແລ້ວ, ແລະກໍນຸ່ງເຄື່ອງໃໝ່ໃສ່ແທນ. ໂປໂລໄດ້ໃຊ້ຄຳປຽບທຽບນີ້ປາສັຍໃນຝູງຊົນຜູ້ທີ່ເຊື່ອຈະຕ້ອງລຶບລ້າງອອກໃຫ້ໝົດໃນແນວຄິດແບບເກົ່າໆຄື ການກະທຳ, ການປາກເວົ້າ, ແລະກໍຈົ່ງສວມໃສ່ທຸກສິ່ງໃຫ້ຄ້າຍຄືກັບພຣະຄຣິດນັກຂຽນທີ່ຊື່ວ່າ ວາເຣັນ ແວບ ໄດ້ຂຽນເຖິງໂປໂລໃນການຮຽກເອີ້ນຜູ້ທີ່ໄດ້ອ່ານຈົດໝາຍທີ່ຂຽນເຖິງພວກເຂົານີ້ແລ້ວໃຫ້ສວມໃສ່ " **ໃຫ້ຫົ່ມພຣະຄຸນ** " ໃຫ້ກັບຊີວິດໃໝ່.

ເຫດຜົນນີ້ແມ່ນສິ່ງທີ່ຈະສະແດງອອກໃຫ້ເຫັນເຖິງຄວາມປ່ຽນແປງໄດ້ເກີດຂື້ນ ແລະພວກເຮົາໃນຖານະຜູ້ທີ່ເຊື່ອກໍຈະໄດ້ມີປະສົບການກັບສິ່ງເຫລົ່ານີ້. ຄົນຜູ້ນຶ່ງສາມາດປ່ຽນໄດ້ຫລາຍຊຸດແຕ່ເຖິງຢ່າງໃດກໍຍັງເປັນຄົນຜູ້ເກົ່າຢູ່. ແຕ່ໂປ

ໂລໄດ້ເວົ້າເຖິງການປ່ຽນແປງຈາກທັມມະຊາດອີກຢ່າງນຶ່ງ, ມີຢູ່ສາມຢ່າງທີ່ໄດ້ສະແດງອອກໃຫ້ເຫັນພຣະຄຸນຂອງພຣະເຈົ້າທີ່ຈະນຳພາໃຫ້ມີການປ່ຽນແປງດັ່ງນີ້: **ພຣະເຈົ້າຊົງຮັກແລະຊົງເລືອກໄວ້ໃຫ້ບໍຣິສຸດ.** ເພາະພຣະເຈົ້າຊົງຮັກພວກເຮົາ, ພຣະອົງຈຶ່ງໄດ້ເລືອກໃຫ້ເຮົາເປັນຜູ້ບໍຣິສຸດ ( ແຍກອອກຕ່າງຫາກ) ໃນຖານະລູກຂອງພຣະອົງ. ໃນຄວາມໝາຍອື່ນນັ້ນ, ພຣະອົງໄດ້ຊົງຊ່ວຍພວກເຮົາ, ແລະດ້ວຍເຫດນີ້ພວກເຮົາຈຶ່ງໄດ້ຮັບຄວາມລອດພົ້ນ, **ພວກເຮົາຄວນຈະສະແດງອອກມາໃຫ້ສົມກັບເປັນຄົນຂອງພຣະເຈົ້າ.**

ຈົ່ງສຳຣວດເບິ່ງຫົວຂໍ້ເຣື່ອງເຄື່ອງນຸ່ງໃໝ່ທີ່ພວກເຮົາຄວນຈະເອົາມາຫົ່ມໄວ້. ແລະນີ້ຄືເຄື່ອງນຸ່ງຫົ່ມທີ່ງົດງາມທີ່ພວກເຮົາສົມຄວນຈະຮັບໄວ້ຕລອດໄປເປັນນິດ! **ສວມໃຈເມດຕາ** ໄດ້ອະທິບາຍເຖິງຈິດໃຈທີ່ມີຄວາມອີດູຕົນສົງສານຄົນອື່ນທີ່ຖືກເຈັບປວດ, ວ່າງເປົ່າ. **ມີໃຈປານີ** ກໍຄືເປັນຄົນທີ່ມີຈິດວິນຍານທີ່ເຕັມລົ້ນດ້ວຍພຣະຄຸນ, ສະແດງອອກດ້ວຍການອ່ອນສຸພາບ, **ຈົ່ງມີໃຈຖ່ອມລົງ** ແທນການໂອ້ອວດໃນເວລາທີ່ພວກເຮົາຍອມຮັບເອົາການເຮັດວຽກງານເປັນຜູ້ຮັບໃຊ້, ຊ່ວຍເຫລືອ. ຈິດວິນຍານທີ່ອ່ອນສຸພາບ ຄືມີຄວາມຮູ້ສຶກແລະເຂົ້າໃຈໃນການຮັບຮູ້ຄວາມຮູ້ສຶກຂອງຄົນອື່ນໆ.

ມີໃຈອົດທົນດົນນານ ມີຄວາມໝາຍຄືການເຮັດນຳຄົນອື່ນທີ່ອາດຈະມີສິ່ງທີ່ທ່ານຂັດເຄືອງໃຈດ້ວຍຄວາມອົດທົນຕໍ່ເຂົາບໍ່ມີໃຈຮ້າຍງ່າຍ. ຈົ່ງຜ່ອນໜັກຜ່ອນເບົາຊຶ່ງກັນແລະກັນ ມັນເປັນການສະແດງອອກມາວ່າເປັນຜູ້ທີ່ມີຄວາມອົດທົນກໍ່ຄົນອື່ນ. ແລະທັງໝົດນີ້ກໍເປັນຄວາມຮູ້ສຶກເລິກທີ່ຈຳເປັນຕ້ອງມີເພື່ອທີ່ຈະໄດ້ເປັນຜູ້ທີ່ ມີໃຈອະພັຍໃຫ້ແກ່ຜູ້ທີ່ມີເຣື່ອງແກ່ຕົນຄືຍົກໂທດໃຫ້ກັນແລະກັນ, ໂດຍອົງໃສ່ພຣະຜູ້ເປັນເຈົ້າໄດ້ຊົງຍົກໂທດໃຫ້ແກ່ເຮົາແລ້ວ. ຖ້າຜູ້ໃດຫາກປະຕິເສດທີ່ຈະຍົກໂທດໃຫ້ກັນນີ້, ເຂົາກໍເປັນຄົນທີ່ບໍ່ເຂົ້າໃຈແລະບໍ່ມີຄວາມຮູ້ສຶກຂອບຄຸນໃນຄວາມໝາຍຄືການໃຫ້ອະພັຍ.

ສຸດທ້າຍ, ໂປໂລໄດ້ແນະນຳໃຫ້ຮູ້ໃນເຣື່ອງຂອງຄວາມ**ຮັກ**ແລະນີ້ຄື **ຈົ່ງເອົາຄວາມຮັກເປັນສາຍຜູກມັດທຸກສິ່ງໄວ້ໃຫ້ເປັນອັນດຽວກັນ**-ຄືກັນກັບສາຍແອວທີ່ຮັດເຄື່ອງນຸ່ງໃສ່ກັນແລະກັນ. **ຄວາມຮັກນີ້ກໍຢູ່ເໜືອສິ່ງອື່ນໃດທັງໝົດ,** ເພາະເປັນຄວາມຮູ້ສຶກທີ່ສຳຄັນທີ່ສຸດ, ເພາະຈຸດສູນກາງຂອງຄຣິສຕຽນກໍຄືສະແດງຄວາມຮັກ. ໃນຈົດໝາຍຂອງໂປໂລທີ່ໄດ້ຂຽນໄປເຖິງພີ່ນ້ອງທີ່ເມືອງຄາລາເຕັຽ, ເພິ່ນກໍໄດ້ເວົ້າເຖິງຄວາມສຳຄັນແລະຈຸດສູນກາງຄືຄວາມຮັກເຊັ່ນດຽວກັນ. ເພິ່ນເອີ້ນວ່າ " ໝາກຜົນຂອງຝ່າຍວິນຍານ " ( ຄລຕ 5: 22 ). ມີພຽງພຣະວິນຍານບໍຣິສຸດເທົ່ານັ້ນທີ່ມີຄວາມສາມາດໃນການຜລິດເຄື່ອງທີ່ງົດງາມນີ້ໄດ້; ພວກເຮົາຈະຕ້ອງໄດ້ນຸ່ງຫົ່ມຄືສະແດງອອກໃນຊີວິດປະຈຳວັນໂດຍໃຫ້ພຣະວິນຍານຊົງນຳພາ.

ໃນຂໍ້ 17 ໄດ້ບັນທຶກຮວມກັນໃນບົດນີ້ທັງໝົດຂອງຈົດໝາຍທີ່ໂປໂລໄດ້ຂຽນ. ຈົ່ງສັງເກດໃນສິ່ງທີ່ເພິ່ນເວົ້າຄື **ຈົ່ງເຮັດທຸກສິ່ງນີ້** ( ຄຳເວົ້າຫລືການກະທຳ) **ໃນພຣະນາມຂອງພຣະເຢຊູເຈົ້າ.** ຄຣິສຕຽນທີ່ມີພຣະນາມຂອງພຣະຄຣິດຢູ່ໃນຕົວ- ແລະພວກເຮົາກໍເປັນຕົວແທນຂອງພຣະອົງຢູ່ໃນໂລກນີ້. ຈະເປັນສິ່ງສຳຄັນຂນາດໃດໜໍ, ຖ້າພວກເຮົາຈະເປັນພະຍານທີ່ສັດຊື່ແລະໄດ້ມາດຕະຖານເຣື່ອງຊີວິດຂອງພຣະອົງດ້ວຍຄຳເວົ້າແລະການກະທຳທີ່ສະແດງອອກມາ. ໃນຂນະທີ່ພຣະອົງຍັງຢູ່ໃນສວັນແລະຊົງປະທັບຢູ່ກ້ຳຂວາພຣະຫັດຂອງພຣະບິດາ, ພວກເຮົາກໍມີພຣະວິນຍານຂອງພຣະອົງສະຖິດຢູ່ໃນເຮົາ ອີກຍັງຊົງເອີ້ນໃຫ້ພວກເຮົາໃຫ້ອອກໄປເຮັດພາຣະກິດຂອງພຣະອົງຕາມທີ່ພຣະອົງຕ້ອງການ. ດ້ວຍເຫດຜົນນີ້ພວກເຮົາຈຳເປັນຕ້ອງໄດ້ປະສານງານກັບໂປໂລ ແລະພີ່ນ້ອງທີ່ເມືອງໂກໂລຊາຍແລະຈົ່ງຂອບພຣະຄຸນຕໍ່ພຣະເຈົ້າຜູ້ເປັນພຣະບິດາໂດຍຜ່ານພຣະອົງ.

( ອຸປຖັມໂດຍ ລາວຊາວເທິນແບ໊ບຕິສສັມພັນ ແປແລະຮຽບຮຽງ a.p www.lsbf.org )